**ASIAN AMERICAN LEGAL DEFENSE AND EDUCATION FUND**
*99 HUDSON STREET, 12 FL • NEW YORK. NY 10013 • TEL 212.966.5932 • FAX 212.966.4303 • INFO@AALDEF.ORG*

# ທ່ານຢາກຮູ້ອັນໃດ

# ໃນການລົງສຳຫລວດປະຊາກອນໃນປີ 2010

ສິງຫາ 2009

- ການສຳຫລວດປະຊາກອນທີ່ຈັດຂຶ້ນຄັ້ງໜຶ່ງຕໍ່ 10 ປີ. ເພື່ອການສະໜອງຂໍ້ມູນທີ່ນຳໃຊ້ໃນການປະຕິບັດນະໂຍບາຍຕ່າງໆທີ່ມີຜົນກະທົບຕໍ່ຊຸມຊົນອາເມລິກາເຊື້ອສາຍອາຊີ, ເຊິ່ງປະກອບມີ:
  - ການຈັດສັນງົບປະມານຂອງລັດຖະບານກາງສະຫະລັດຫລາຍກວ່າ 300 ຕື້ໂດລາສະຫະ ລັດ ໃຫ້ບັນດາລັດ ແລະ ຊຸມຊົນເພື່ອຮັບໃຊ້ສັງຄົມ, ເຊັ່ນ ESL, ຫ້ອງຮຽນ, ການຝຶກ ອາຊີບ ແລະ ສິນລະປະດົນຕີຕ່າງໆ.
  - ການປະກາດໃຊ້ກົດໝາຍວ່າດ້ວຍສິດທິຂອງພົນລະເມືອງໃນການສຶກສາ, ການເຮັດວຽກ, ການປິ່ນປົວສຸຂະພາບ, ການຕັ້ງຖິ່ນຖານ, ການກູ້ຢືມ ແລະ ການອອກສຽງ
  - ການມີສິດໃຊ້ສອງພາສາໄປຄວບຄູ່ກັນ
  - ການແບ່ງທີ່ນັ່ງໃນສະພານິຕິບັນຍັດໃຫ້ລັດຕ່າງໆ, ການກຳນົດໃຫ້ມີຕົວແທນຈາກເຊື້ອຊາດ ແລະ ຊົນເຜົ່າສ່ວນໜ້ອຍເຂົ້າໄປຫລິ້ນການເມືອງ.
- ຂໍ້ມູນທີ່ທ່ານສະໜອງໃຫ້ຢູ່ໃນການສຳຫລວດປະຊາກອນຈະເກັບເປັນຄວາມລັບຢ່າງດີ. ຕາມກົດໝາຍແລ້ວ, ບໍ່ສາມາດນຳເອົາຂໍ້ມູນສ່ວນຕົວຂອງທ່ານໄປໃຊ້ຮ່ວມກັບ USCIS, ICE, IRS, ຕຳຫລວດ, ເຈົ້າຂອງອາຄານ ຫລື ເພື່ອນບ້ານ.
- ແບບສອບຖາມຂອງການສຳຫລວດປະຊາກອນໃນຮອບສິບປີຈະຖາມຄຳຖາມງ່າຍໆຈຳນວນໜຶ່ງເຊັ່ນ: ຊື່, ຍາດພີ່ນ້ອງ, ເພດ, ອາຍຸ, ວັນເກີດ, ເຊື້ອຊາດ ແລະ ມີເຮືອນຫລືເຊົ່າເຮືອນຢູ່ໃສ. ຈະມີແບບສອບຖາມຂອງການສຳຫລວດປະຊາກອນຈຳນວນໜຶ່ງ (ການສຳຫລວດຊຸມຊົນອາເມລິກາ) ຈະຖາມເຖິງສັນຊາດ, ລາຍໄດ້, ຊາດກຳເນີດ ແລະ ຄວາມສາມາດໃຊ້ພາສາອັງກິດດ້ວຍ. ການສຳຫລວດນີ້ບໍ່ເຄີຍຖາມເຖິງສະຖານະພາບການອົບພະຍົບເຂົ້າເມືອງເລີຍ.
- ໃນລະຫວ່າງເດືອນກຸມພາ ຫາ ມີນາ 2010 ທ່ານຈະໄດ້ຮັບຈົດໝາຍຊຶ່ງເປັນແບບສອບຖາມກ່ຽວກັບການສຳຫລວດປະຊາກອນ. ໃຫ້ທ່ານຈົ່ງຕື່ມໃສ່ຊ່ອງວ່າງຕ່າງໆໃຫ້ລະອຽດທີ່ສຸດເທົ່າທີ່ເປັນໄປໄດ້ ຈາກນັ້ນຈຶ່ງສົ່ງແບບສອບຖາມດັ່ງກ່າວນີ້ຄືນ ໂດຍທ່ານຈະບໍ່ໄດ້ເສຍຄ່າສົ່ງ. ຖ້າທ່ານບໍ່ໄດ້ຮັບແບບ ສອບຖາມນີ້, ທ່ານສາມາດໄປເອົາແບບຟອມ"ຖືກນັບເຂົ້າ" ຈາກສະຖານທີ່ຕ່າງໆໃນຊຸມຊົນໄດ້.
- ລະຫວ່າງເດືອນເມສາ ຫາ ມີຖຸນາ 2010 ຈະມີຄົນຖືບັນຊີລາຍຊື່ໄປຫາເຮືອນແຕ່ລະຫລັງໃນບໍລິເວນໃກ້ບ້ານທ່ານ ເພື່ອຕິດຕາມກັບເຮືອນແຕ່ລະຫລັງ ໂດຍມີວັດຖຸປະສົງດັ່ງນີ້:
  - ກວດກາເບິ່ງເຮືອນຫລັງທີ່ບໍ່ໄດ້ສົ່ງແບບສອບຖາມຄືນທາງຈົດໝາຍ. ຖ້າບໍ່ພົບໃຜໃນບ້ານຫລັງນັ້ນ, ຜູ້ສຳຫລວດປະຊາກອນກໍ່ໄປຫາເຮືອນຫລັງທັດໄປ.
  - ເຂົ້າໄປຖາມເບິ່ງເຮືອນທີ່ບໍ່ໄດ້ສົ່ງແບບສອບຖາມຄືນ ເພື່ອກວດເບິ່ງວ່າເຂົາຕອບແບບສອບຖາມຖືກຕ້ອງແລ້ວຫລືຍັງ.
  - ຕິດຕາມຂໍ້ມູນທີ່ຜູ້ທີ່ຂຽນຂໍ້ມູນໃນໃບ "ຖືກນັບເຂົ້າ" ທີ່ເອົາມາຈາກສະຖານທີ່ໃກ້ຄຽງ.

- ພະນັກງານສຳຫລວດອາດເຂົ້າໄປຫາເຮືອນແຕ່ລະຫລັງຫລາຍຄັ້ງ, ດັ່ງນັ້ນຈຶ່ງຂໍຄວາມຮ່ວມມື ແລະ ຕອບຄຳຖາມດ້ວຍ ເພື່ອຮັບປະກັນໃນການນັບຈຳນວນປະຊາກອນໃຫ້ຄົບຖ້ວນ.
- ຖ້າທ່ານບໍ່ຮູ້ພາສາອັງກິດ, ທ່ານກໍ່ຍັງມີສ່ວນຮ່ວມໄດ້ເຊັ່ນກັນ ໂດຍໃຫ້ທ່ານ:
  - ໂທລະສັບໄປຫາສູນບໍລິການຊ່ວຍສຳຫລວດປະຊາກອນທີ່ຈະເປີດຂຶ້ນໃນວັນທີ່ 25 ກຸມພາ 2010 ໄປຈົນ ຮອດ ວັນທີ່ 30 ກໍລະກົດ 2010. ເບີໂທນີ້ແມ່ນ 1-866-872-6868. ໃນສູນນີ້ມີພະນັກງານທີ່ຮູ້ພາສາຂອງທ່ານ.
    - ທ່ານຈຶ່ງສາມາດຂຽນແບບຟອມໄດ້ຜ່ານການໂທລະສັບ ແລະ ຕົວແທນຂອງສູນສຳຫລວດປະຊາກອນ ສາມາດຕອບຄຳຖາມເພີ່ມເຕີມໄດ້.
    - ທ່ານສາມາດຂໍເອກະສານເປັນພາສາຈີນ, ເກົາຫລີ, ຫວຽດນາມ, ສະເປນ ແລະ ລັດເຊຍໄດ້.
    - ສຸດທ້າຍນີ້ຖ້າທ່ານຕ້ອງການຄວາມຊ່ວຍເຫລືອດ້ານພາສານອກຈາກພາສາທີ່ກ່າວມາຂ້າງເທິງນີ້ ທ່ານກໍ່ສາມາດຂໍຄວາມຊ່ວຍເຫລືອໄດ້
  - ໂທລະສັບຫາພະນັກງານສຳນັກທະບຽນປະຈຳທ້ອງຖິ່ນ ເພື່ອຂໍໃຫ້ສົ່ງພະນັກງານທີ່ຮູ້ພາສາ ຂອງທ່ານໄປຫາທ່ານທີ່ບ້ານ. ເບີໂທລະສັບເຫຼົ່ານີ້ຈະສະໜອງໃຫ້ໃນທັນທີທີ່ພວກມັນມີ.
- ຖ້າທ່ານສົງໄສວ່າຄົນທີ່ເຂົ້າມາເຮືອນຂອງທ່ານນັ້ນເປັນພະນັກງານສຳຫລວດສຳມະໂນຄົວ/ປະຊາກອນຫລືບໍ່ນັ້ນ
  - ໃຫ້ທ່ານຂໍເບິ່ງບັດ "ສຳຫລວດສຳມະໂນຄົວ" ຊຶ່ງອອກໂດຍລັດຖະບານສະຫະລັດ. ພະນັກງານສຳຫລວດນີ້ອາດຈະຫິ້ວຖົງດຳທີ່ພິມເປັນຕົວໜັງສືໃຫຍ່ວ່າ "Census 2010"
  - ຖ້າຫາກທ່ານຍັງບໍ່ຫາຍກັງວົນ, ທ່ານສາມາດໂທຫາສຳນັກງານສຳຫລວດປະຊາກອນ ລະດັບພາກພື້ນ ເພື່ອຂໍໃຫ້ຢັ້ງ ຢືນວ່າຄົນຜູ້ນັ້ນເປັນພະນັກງານຂອງສຳນັກງານທະບຽນ ປະຊາກອນແຫ່ງສະຫະລັດ.
- ຖ້າພະນັກງານສຳນັກທະບຽນປະຊາກອນປະພຶດຕົວບໍ່ເໝາະສົມ ຫຼືເປີດເຜີຍຂໍ້ມູນສ່ວນຕົວຂອງທ່ານ ໃຫ້ແຈ້ງໄປທີ່ AALDFF ເລກໂທລະສັບ 212-966-5932. AALDEF ເປັນຜູ້ຕິດຕາມເບິ່ງກິດຈະກຳຂອງສຳນັກທະບຽນປະຊາກອນແຫ່ງສະຫະລັດຢູ່ທຸກລັດ. ພວກເຮົາຈະລາຍງານກໍລະນີເກີດມີການກະທຳໃດໜຶ່ງທີ່ບໍ່ເໝາະສົມ ຫລື ການເປີດເຜີຍຂໍ້ມູນສ່ວນຕົວ. ນັກກົດໝາຍຂອງ AALDEF ຈະປົກປ້ອງຄວາມເປັນສ່ວນຕົວຂອງທ່ານໄວ້, ໂດຍສະເພາະ ຫາກທ່ານບໍ່ມີໃບອະນຸຍາດເຂົ້າເມືອງ.

**ສິ່ງໜຶ່ງທີ່ສຳຄັນຄື ຕ້ອງການຢາກໄດ້ຈຳນວນຊຸມຊົນຊາວອາເມລິກາເຊື້ອສາຍອາຊີ!**
**ຈົ່ງປະກອບສ່ວນເຂົ້າໃນການສຳຫລວດປະຊາກອນຄັ້ງນີ້ດ້ວຍ!**

ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່:

Asian American Legal Defense & Education Fund (AALDEF)
99 Hudson Street, 12th Floor ▪ New York, NY 10013
800.966.5946 ▪ info@aaldef.org ▪ www.aaldef.org

© 2009 AALDEF – Census Fact Sheet – Lao